## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 7 ກັນຍາ 2008 (9-7-2008)

---

# ອະພັຍໃຫ້ຢ່າງໄວແລະອະພັຍໃຫ້ສເມີ

**ຂໍ້ພຣະຄັມພີໃນບົດຮຽນ**: (ມັດທາຍ 18: 21-35)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?**: ຄວາມຫມາຍແທ້ຂອງການສິດສອນຂອງພຣະເຢຊູ ຕໍ່ພວກສາວົກຂອງພຣະອົງ ເຣື່ອງການປະຕິບັດແລະສັມ ພັນກັບຄົນອື່ນ(ມັດທາຍ 18:1-20), ເປໂຕໄດ້ຖາມເຖິງຈຳນວນຂອບເຂດທີ່ລາວຕ້ອງອະພັຍໃຫ້ແກ່ພີ່ນ້ອງ. ພຣະເຢຊູໄດ້ບອກເປັນຄຳອຸປມາເຣື່ອງຂ້າໃຊ້ທີ່ບໍ່ຍອມໃຫ້ອະພັຍແກ່ຜູ້ອື່ນ ແລະເນັ້ນຫນັກແກ່ຜູ້ທີ່ຕິດຕາມ ພຣະອົງວ່າບໍ່ຄວນມີຂອບເຂດຈຳກັດຕໍ່ການໃຫ້ອະພັຍຂອງພວກເຂົາ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?**:
ການແກ້ແຄ້ນຄອບງຳຢູ່ຕລອດມື້, ປະເທດຕໍ່ປະເທດກໍໃຊ້ການຍຸ-ແຍ່ທາງການເມືອງ. ພວກສມັກຫາສຽງດ້ານການເມືອງກໍໂຕ້ຕອບການໂຄສະນາຂອງຄູ່ແຂ່ງດ້ວຍຕົວເອງ. ບາງທີສິ່ງທີ່ນ້ອຍທີ່ສຸດໃນຊີວິດຂອງຄົນແກ່ກະສຽນກໍສາມາດເຮັດໃຫ້ພວກເຂົາເສັຽຊີວິດໄດ້. ແມ້ແຕ່ໃນຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະຄຣິດ, ບາງຄົນກໍເກັບຄວາມເຈັບແຄ້ນທີ່ມີຕໍ່ຄົນອື່ນໄວ້ເປັນປີໆ, ເກັບຮັກສາຄວາມເຂົ້າໃຈຜິດ ໄວ້ຢ່າງຈິງຈັງ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?**:
ທ່ານຈະຖືກທ້າທາຍໃຫ້ອະພັຍແກ່ຄົນອື່ນໆໂດຍບໍ່ມີຂອບເຂດຈຳກັດເພາະວ່າທ່ານກໍໄດ້ຮັບການໃຫ້ອະພັຍຈາກພຣະເຈົ້າຢ່າງບໍ່ມີຂອບເຂດຈຳກັດ.

## ແນະນຳການຈັດຕຽມ ແລະແຜນການສອນຂອງຄຣູ:

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ
6. ໃຫ້ນັກຮຽນເວົ້າຄຳພະຍານຈາກປະສົບການໃນອາທິດທີ່ຜ່ານມາສັ້ນໆ.

**1. <u>ໜີ້ຖືກຍົກເລີກ</u>** (ມັດທາຍ 18: 21-27)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ18:21-27
- ນຳພານັກຮຽນຄົ້ນຄວ້າຄຳຖາມຂອງເປໂຕໃນຂໍ້ 21 ວ່າເຫດຜົນທີ່ເປໂຕຖາມນັ້ນເພາະອັນໃດ, ປະເພດໃດ ແລະເປັນຫຍັງພຣະເຢຊູຈຶ່ງຕອບເຂົາເຈົ້າມາແບບນັ້ນ (ຄຳອຸປມາ)
- ໃຫ້ຂີດເສັ້ນກະດານ ແລ້ວແບ່ງເປັນສາມສ່ວນ, ທາງຊ້າຍສຸດໃຫ້ຂຽນ ພຣະເຈົ້າ/ກະສັດ. ໃຫ້ນັກຮຽນກັບໄປເບິ່ງຂໍ້ທີ 23 ເຖິງ 27 ແລ້ວໃຫ້ພິຈາຣະນາເບິ່ງທາງຂອງກະສັດນັ້ນປຽບເໝືອນພຣະເຈົ້າ. ຂຽນຄວາມຄິດເຫັນຂອງນັກຮຽນໃສ່ລຸ່ມ ພຣະເຈົ້າ/ກະສັດ
- ແບ່ງປັນໃນການປະສົບການຊີວິດຂອງທ່ານທີ່ທ່ານໄດ້ຮັບອະພັຍຈາກຜູ້ອື່ນ ທີ່ທ່ານບໍ່ຢາກໃຫ້ຜູ້ນັ້ນເສັຽໃຈໃຫ້ໃນການກະທຳຂອງທ່ານ (ເຊັ່ນ ທ່ານເຮັດໃຫ້ແກ້ວປ່ອງຢ້ຽມຄົນອື່ນແຕກ).

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມັດທາຍ 18:21-27)

1. ມັນເປັນເໝືອນຄຣິສຕຽນຮຽກຮ້ອງອ້ອນວອນຂໍຄວາມເມດຕາຈາກພຣະເຈົ້າໃນເຣື່ອງຄວາມຜິດບາບຂອງເຂົາ ຫລືເພື່ອໃຫ້ເຮົາອະພັຍໃຫ້ເຂົາພ້ອມບໍ່?
2. ໃນການຖາມຂອງເປໂຕແມ່ນຫຍັງທີ່ເປັນຈຸດປະສົງທີ່ເປໂຕຢາກໄດ້ຍິນຄຳຕອບຈາກພຣະເຢຊູ?
3. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງບໍ່ໃຊ້ການບັງຄັບໃນການໃຫ້ອະພັຍແກ່ພວກເຮົາທັງຫຼາຍ?
4. ທ່ານຈະສະແດງໃຫ້ຄົນອື່ນຮູ້ວ່າທ່ານໄດ້ໃຫ້ອະພັຍເຂົາແລ້ວໂດຍວິທີໃດ? ທ່ານຮູ້ຈັກວ່າພຣະເຈົ້າໄດ້ອະພັຍໃຫ້ທ່ານແລ້ວແນວໃດ?

**2. <u>ຫົວໃຈແຂງກະດ້າງ</u>** (ມັດທາຍ 18: 28-30)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 18:28-30
- ນຳພານັກຮຽນໄປຫາຫ້ອງທາງກາງໃນກະດານທີ່ຂີດໄວ້ຂຽນ ຂ້າທາດຜູ້ທີນຶ່ງ/ພວກເຮົາ. ໃນທາງ
- ໃດແດ່ທີ່ພວກເຮົາຄືຂ້າທາດຜູ້ທີນຶ່ງ, ໃຫ້ຂຽນຄຳຕອບເຂົາເຈົ້າໃສ່ໃນຫ້ອງນີ້.
- ແບ່ງປັນເວລາທີ່ທ່ານບໍ່ຍອມອະພັຍໃຫ້ແກ່ຄົນອື່ນທີ່ເຮັດຜິດຕໍ່ທ່ານ. ຄິດເບິ່ງວ່າມີຫຍັງທີ່ເປັນຜົນຕໍ່ຄວາມເປັນເພື່ອນ ແລະຄວາມຊົມຊື່ນຍິນດີ ທັ້ງທາງໃນຈິດໃຈ ແລະທາງນອກທີ່ເຄີຍເປັນເພື່ອນກັນມາ. ຊຶ່ງຊີ້ໃຫ້ເຫັນເຖິງວ່າພວກເຮົາເປັນຜູ້ທີ່ພຣະເຈົ້າໄດ້ຊົງໃຫ້ອະພັຍໃຫ້ໂດຍພຣະອົງເອງ ແລະພວກເຮົາບໍ່ໄດ້ອະພັຍໃຫ້ຊຶ່ງກັນ ແລະກັນ
- ຄຳຖາມ: ແມ່ນຫຍັງທີ່ເປັນຕົ້ນເຫດໃຫ້ຂ້າໃຊ້ຜູ້ທີນຶ່ງເຮັດຜິດແລະຖືກຮຽກຕົວໃຫ້ໄປຈ່າຍໜີ້ສິນ?
- ພວກເຮົາບາງເທື່ອກໍຂຶ້ນຢູ່ກັບການຕົກລົງ (ຕັດສິນ)ທາງກົດໝາຍ. ເພາະຄວາມເຊື່ອຂອງພວກເຮົາຂຶ້ນຢູ່ກັບພຣະເຈົ້າທີ່ຮຽກຮ້ອງໃຫ້ພວກເຮົາໃຫ້ອະພັຍຊຶ່ງກັນ ແລະກັນ.
- ໃນຂໍ້ທີ່ 28ໄດ້ຊີ້ໃຫ້ເຫັນວ່າ ຂ້ອຍໃຊ້ຜູ້ທີນຶ່ງນັ້ນໄດ້ອອກໄປ ແລ້ວໄປພົບກັບຜູ້ທີ່ຕິດໜີ້ລາວ, ຂໍ້ທີ 30 ໄດ້ຊີ້ໃຫ້ເຫັນການເລືອກເອົາທາງການບໍ່ໃຫ້ອະພັຍຂອງຂ້າໃຊ້ຜູ້ທີນຶ່ງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມັດທາຍ 18:28-30

1. ໃນເມື່ອທ່ານໄດ້ຕັດສິນໃຈເອົາການບໍ່ໃຫ້ອະພັຍນັ້ນມີທາງໃດແດ່ທີ່ເຮັດໃຫ້ທ່ານພໍໃຈ?
2. ການທີ່ພວກເຮົາມີໃຈແຂງກະດ້າງນັ້ນມີສ່ວນກ່ຽວຂ້ອງກັບການດຶງດູດຈາກສັງຄົມແນວໃດ?
3. ເຮັດແນວໃດເຮົາຈຶ່ງຈະສາມາດປ້ອງກັນການຕໍ່ຕ້ານຂອງເຂົາເຈົ້າໄດ້?
4. ການໃຫ້ອະພັຍຢ່າງຈິງໃຈສເມີໄດ້ທຳໃຫ້ມີຜົນດີກັບມາຕໍ່ຜູ້ທີ່ກະທຳຜິດຕໍ່ທ່ານບໍ່?

3. <u>**ຫວັງຈະໄດ້ຮັບການໃຫ້ອະພັຍໂທດ**</u> (ມັດທາຍ 18:31-35)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 18:31-35
- ຂຽນ "ຂ້າໃຊ້ຜູ້ທີສອງ/ຜູ້ອື່ນ" ໃສ່ໃນຫ້ອງທີສາມໃນກະດານ ແລ້ວນຳພານັກຮຽນສລຸບສັ້ນ ໆ ວ່າພວກເຮົາຄວນກະທຳຕໍ່ຊຶ່ງກັນ ແລະກັນ ຊຶ່ງຂ້າໃຊ້ຜູ້ທີນຶ່ງໄດ້ກະທຳຕໍ່ຂ້າໃຊ້ຜູ້ທີ ສອງ ແລະ ໃນເມື່ອພວກເຮົາບໍ່ຍອມໃຫ້ອະພັຍແລ້ວຜົນທີ່ຕາມມານັ້ນແມ່ນຫຍັງ?
- ສັງເກດເບິ່ງກະສັດທີ່ມີຄວາມໃຈຮ້າຍໃຫ້ຂ້າໃຊ້ຜູ້ທີນຶ່ງທີ່ບໍ່ໃຫ້ອະພັຍແດ່ເພື່ອນຂອງລາວ. ຊີ້ໃຫ້ເຫັນເຖິງແບບຢ່າງການອະທິຖານໃນພຣະທັມ (ມັດທາຍ 6:9-15)ພຣະເຢຊູໄດ້ຊົງແນະນຳໂດຍກົງຊຶ່ງໃຫ້ພວກເຮົາໃຫ້ອະພັຍຕໍ່ຊຶ່ງກັນ ແລະກັນ, ເພື່ອ ພຣະເຈົ້າຈະໃຫ້ອະພັຍແກ່ພວກເຮົາ.
- ການສິດສອນເຣື່ອງນີ້ມີຄວາມແຕກຕ່າງຈາກເຣື່ອງໃນນິຍາຍສຸພາສິດບໍ່?
- ໃນເຣື່ອງນັ້ນຂ້າໃຊ້ຜູ້ທີນຶ່ງໄດ້ຮັບການອະພັຍຈາກກະສັດດ້ວຍການອ້ອນວອນຂໍ. ພວກເຮົາທູນຂໍໃຫ້
- ພຣະເຈົ້າອະພັຍໃຫ້ແກ່ພວກເຮົາເໝືອນດັ່ງເຮົາໄດ້ອະພັຍໃຫ້ຄົນອື່ນ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ມັດທາຍ 18:31-35

1. ຖ້າຫາກທ່ານອະພັຍໃຫ້ແກ່ຄົນອື່ນຢ່າງງ່າຍ ໆ ເພາະວ່າພຣະເຈົ້າໄດ້ອະພັຍໃຫ້ທ່ານແລ້ວ, ທ່ານຈະອະທິບາຍໃນການກະທຳຂອງທ່ານໃຫ້ຜູ້ທີ່ຍັງບໍ່ທັນເຊື່ອແນວໃດ?
2. ທ່ານຈື່ໄດ້ບໍ່ວ່າເວລາທີ່ທ່ານໄດ້ອະພັຍໃຫ້ບາງຄົນເພາະພຣະເຈົ້າເປັນຜູ້ໃຫ້ອະພັຍທ່ານກ່ອນ?
3. ການທີ່ຈະອະພັຍໃຫ້ແກ່ນັກເລງອັນຕະພານນັ້ນເປັນການຍາກບໍ່?

<u>**ຈົດຈໍ່ຢູ່ໃນພຣະຄັມພີແຫ່ງຄວາມຈິງ:**</u>

- ຄຣິສຕຽນໄດ້ຮັບການອະພັຍໂທດຄວາມຜິດບາບຂອງເຂົາເຈົ້າດ້ວຍການເມດຕາຂອງພຣະເຈົ້າ. ບໍ່ແມ່ນຍ້ອນຄວາມດີ.
- ຜູ້ທີ່ເຊື່ອທັງຫລາຍບໍ່ຄວນມີການກະທຳໃຫ້ເສັຽໃຈ, ຫົວໃຈທີ່ບໍ່ຍອມໃຫ້ອະພັຍ, ພຣະເຈົ້າມີພຣະປະສົງໃຫ້ພວກເຮົາໃຫ້ອະພັຍຊຶ່ງກັນ ແລະກັນ.
- ຖ້າພວກເຮົາບໍ່ຍອມໃຫ້ອະພັຍແກ່ຄົນອື່ນ, ພຣະເຈົ້າກໍຈະລົງໂທດພວກເຮົາ ຖືວ່າເປັນລູກທີ່ບໍ່ເຊື່ອຟັງຄວາມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**